ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຫົວໜ້າຫ້ອງການກຸ່ມຕາງໜ້າ ສປປ ລາວ ປະຈໍາ ADB ເຂົ້າຢ້ຽມຂໍ່ານັບທ່ານຮອງຜູ້ວ່າການ ທຫລ



ທ່ານ Sameer Kumar Khare ຫົວໜ້າຫ້ອງການກຸ່ມຕາງໜ້າ ສປປ ລາວ ປະຈໍາທະນາຄານພັດທະນາອາຊີ (ADB) ພ້ອມດ້ວຍຄະນະໄດ້ເຂົ້າຢ້ຽມຂໍ່ານັບທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ໃນຕອນບ່າຍຂອງວັນທີ 11 ພຶດສະພາ 2022 ທີ່ຫ້ອງຮັບແຂກຄະນະຜູ້ວ່າການ ທຫລ ໂດຍມີຜູ້ກ່ຽວຂ້ອງຈາກ 2 ພາກສ່ວນເຂົ້າຮ່ວມ.

ຫົວໜ້າຫ້ອງການກຸ່ມຕາງໜ້າ ສປປ ລາວ ປະຈໍາ ADB ໄດ້ປຶກສາຫາລືທ່ານຮອງຜູ້ວ່າການ ທຫລ ກ່ຽວກັບການຟື້ນຟູເສດຖະກິດພາຍຫຼັງການແຜ່ລະບາດພະຍາດ COVID-19 ແລະ ແຜນແກ້ໄຂ/ປັບປຸງສະພາບຄວາມຫຍຸ້ງຍາກທາງເສດຖະກິດມະຫາພາກ. ທ່ານຮອງຜູ້ວ່າການ ທຫລ ໄດ້ໃຫ້ຮູ້ວ່າ: ໃນປີ 2022, ສະພາບເສດຖະກິດສາກົນ ແລະ ພາຍໃນ ຍັງສືບຕໍ່ປະເຊີນກັບສິ່ງທ້າທາຍ ເຖິງແມ່ນວ່າ ເສດຖະກິດ ສປປ ລາວ ຄາດວ່າຈະມີການຟື້ນຕົວດີຂຶ້ນກວ່າປີ 2021 ເຊິ່ງຄາດວ່າຈະຂະຫຍາຍຕົວໃນລະດັບ 4-4,5% ຈາກການຜ່ອນຄາຍລົງຂອງລະດັບຄວາມຮຸນແຮງຂອງ COVID-19, ການເລີ່ມເປີດປະເທດ ແລະ ການຈ່າຍວັກຊີນທີ່ກວມອັດຕາສູງຂຶ້ນໃນຂອບເຂດທົ່ວປະເທດ; ແຕ່ເສດຖະກິດ ສປປ ລາວ ຍັງປະເຊີນກັບສິ່ງທ້າທາຍ ຈາກບັນຫາການເພີ່ມຂຶ້ນຂອງລາຄາສະບຽງອາຫານຢູ່ຕະຫຼາດສາກົນ, ການປັບຂຶ້ນອັດຕາດອກເບ້ຍຢູ່ບັນດາປະເທດເສດຖະກິດສໍາຄັນຂອງໂລກ, ການເພີ່ມຂຶ້ນຂອງອັດຕາເງິນເຟີ້ຢູ່ບັນດາປະເທດຄູ່ຄ້າສໍາຄັນຂອງ ສປປ ລາວ ທີ່ຄາດວ່າ ຈະສືບຕໍ່ສ້າງແຮງກົດດັນ ຕໍ່ລະດັບລາຄາພາຍໃນ-ອັດຕາເຟີ້ຢູ່ ສປປ ລາວ. ຈາກຜົນກະທົບການການແຜ່ລະບາດ COVID-19 ເຮັດໃຫ້ເສດຖະກິດຂອງປະເທດອ້ອມຂ້າງ ແລະ ທົ່ວໂລກປະເຊີນກັບວິກິດເສດຖະກິດ ເຊິ່ງ ສປປ ລາວ ກໍ່ຫຼີກລ່ຽງບໍ່ໄດ້, ການຊ່ວຍເຫຼືອຈາກອົງການຈັດຕັ້ງ ແລະ ສະຖາບັນການເງິນສາກົນ ກໍ່ເປັນສິ່ງຈໍາເປັນທີ່ສຸດ ເຊິ່ງ ທຫລ ກໍ່ຄື ສປປ ລາວ ກໍ່ສະແດງຄວາມ

ຂອບໃຈເປັນຢ່າງສູງ ມາຍັງ ADB ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອທາງດ້ານວິຊາການ ແລະ ທຶນຮອນແກ່ ສປປ ລາວ ໃນໄລຍະຜ່ານມາ ແລະ ກໍ່ຂໍໃຫ້ສືບຕໍ່ໃຫ້ການຊ່ວຍເຫຼືອ ໂດຍສະເພາະການຟື້ນຟູເສດຖະກິດ ກໍ່ຄືຂະແໜງການ ທີ່ໄດ້ຮັບຜົນກະທົບຈາກ COVID-19 ເປັນຕົ້ນ: ກະສິກຳ, ທ່ອງທ່ຽວ, ໂຄງລ່າງພື້ນຖານ, ການພັດທະນາຕົວເມືອງ ລວມໄປເຖິງການຫຼຸດຜ່ອນບັນຫາການປ່ຽນແປງດິນຟ້າອາກາດ ແລະ ຂະແໜງການທະນາຄານທຫລ ກໍ່ສະເໜີໃຫ້ ADB ສືບຕໍ່ໃຫ້ການຊ່ວຍເຫຼືອ ແລະ ຊຸກຍູ້ວຽກການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ພັດທະນາຕະຫຼາດ ທຶນມີຜົນສຳເລັດ ແລະ ຂະຫຍາຍຕົວຍິ່ງຂຶ້ນ.



**#ຂ່າວ ແລະ ພາບໂດຍ: ນາງ ປາໃນ ພົມທະລາ**

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ